# ນາຍົກລັດຖະມົນຕີແຫ່ງ ຣາຊະອານາຈັກກຳປູເຈຍ ແລະ ຄະນະໄດ້ເດີນທາງມາຢ້ຽມຢາມ ສປປ ລາວ ຢ່າງເປັນທາງການ

ຕອບສະໜອງຕາມຄຳເຊີນຂອງ ພະນະທ່ານ ບົວສອນ ບຸບຜາວັນ, ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ, ສົມເດັດ ອັກຄະມະຫາເສນາບໍດີ ເຕໂຈ ຮຸນແຊນ, ນາຍົກລັດຖະມົນຕີແຫ່ງ ຣາຊະອານາຈັກ ກຳປູເຈຍ ແລະ ຄະນະໄດ້ເດີນທາງມາ ຢ້ຽມຢາມ ສປປ ລາວ ຢ່າງເປັນທາງການ ໃນວັນທີ 2829 ມີນາ 2008. ພາຍຫລັງເດີນທາງມາເຖິງນະຄອນຫລວງວຽງຈັນ, ພິທີຕ້ອນຮັບເປັນທາງການໄດ້ຈັດຂຶ້ນຢ່າງສົມກຽດ ແລະ ສະຫງ່າລາສີ ທີ່ຫໍສະພາແຫ່ງຊາດ, ນຳໂດຍພະນະທ່ານ ບົວສອນ ບຸບຜາວັນ, ນາຍົກລັດຖະມົນຕີ ພ້ອມດ້ວຍການເຂົ້າຮ່ວມຂອງສະມາຊິກຄະນະລັດຖະບານ, ສະມາຊິກສະພາແຫ່ງຊາດ ຫົວໜ້າບັນດາອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ນາຍທະຫານ, ນາຍຕຳຫລວດ ແລະ ຜູ້ຕາງໜ້າມວນຊົນຊາວນະຄອນ ຫລວງວຽງຈັນ.

ການພົບປະເຈລະຈາເປັນທາງການໄດ້ຈັດຂຶ້ນໃນຕອນບ່າຍຂອງວັນດຽວກັນຊຶ່ງທ່ານ ບົວສອນ ບຸບຜາວັນ, ນາຍົກລັດ ຖະມົນຕີ ແຫ່ງ ສປປ ລາວ ຖືໂອກາດນີ້ ສະແດງຄວາມຊົມເຊີຍລັດຖະບານຂອງສົມເດັດ ທີ່ໄດ້ມີຜົນງານອັນໃຫຍ່ຫລວງຫລາຍ ປະການໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດກຳປູເຈຍ ແລະ ສະແດງຄວາມເຊື່ອໝັ້ນວ່າ: ສອງປະເທດ ລາວ ແລະ ກຳປູເຈຍ ຈະສືບຕໍ່ຮັດແໜ້ນສາຍພົວພັນມິດຕະພາບ ແລະ ການຮ່ວມມືໃນດ້ານຕ່າງໆລະຫວ່າງສອງຊາດ ໃຫ້ນັບມື້ມີ ຄວາມເຂັ້ມແຂງ ແລະ ພັດທະນາຍິ່ງໆໄປ, ທ່ານ ນາຍົກລັດຖະມົນຕີທັງສອງໄດ້ຕີລາຄາຄືນ ກ່ຽວກັບສາຍພົວພັນມິດຕະພາບ ອັນເປັນມູນເຊື້ອ ແລະ ຜົນການຮ່ວມມືລະຫວ່າງສອງປະເທດຖານບ້ານໃກ້ເຮືອນຄຽງທີ່ດີ ແລະ ປຶກສາຫາລືແຜນການ ຮ່ວມມືໃນຕໍ່ໜ້າ ເພື່ອນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນທັງສອງປະເທດ. ໃນການພົບປະຫາລືຄັ້ງນີ້, ທ່ານ ນາຍົກລັດຖະມົນຕີທັງສອງ ສະແດງຄວາມຊົມເຊີຍ ຄະນະກຳມະການຊາຍແດນ ສອງຝ່າຍ ທີ່ໄດ້ຮ່ວມມືກັນຢ່າງແໜ້ນແຟ້ນ ເຮັດໃຫ້ການສຳຫລວດ ທົດເນັ່ງຊາຍແດນສຳເລັດແລ້ວປະມານ 465 ກິໂລແມັດ ແລະ ປັກຫລັກໝາຍຊຶ່ງຖາວໄດ້ 121 ຫລັກໝາຍເທົ່າກັບ 86% ແນໃສ່ໃຫ້ເສັ້ນຊາຍແດນ ເປັນເສັ້ນຊາຍແດນແຫ່ງມິດຕະພາບ ແລະ ສ້າງເງື່ອນໄຂອັນດີໃຫ້ແກ່ການ ໄປມາຫາສູ່ຂອງປະຊາຊົນສອງຊາດ , ເຫັນດີໃຫ້ກະຊວງກ່ຽວຂ້ອງ ຂອງສອງຝ່າຍຈັດຕັ້ງປະຕິບັດຕາມບົດບັນທຶກລະຫວ່າງ ກະຊວງໂຍທາທິການ ແລະ ຂົນສົ່ງຂອງລາວ ແລະ ກຳປູເຈຍທີ່ໄດ້ເຊັນກັນໃນວັນທີ 5 ມັງກອນ 2007 ເພື່ອເຊື່ອມເສັ້ນທາງ ເລກທີ 13 ຂອງລາວກັບທາງເລກທີ 7 ຂອງກຳປູເຈຍ ແລະ ຊົມເຊີຍ ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການ ກະຊວງການຕ່າງປະເທດ ຂອງສອງຝ່າຍທີ່ໄດ້ວາງສີລາລຶກ ໃນວັນທີ 17 ຕຸລາ 2007 ເພື່ອສ້າງຕັ້ງດ່ານສາກົນລະຫວ່າງ ສອງປະເທດລາວກຳປູເຈຍ ແລະ ການເຊັນສັນຍາຊື້ຂາຍໄຟຟ້ານຳກັນແລ້ວ ຈຶ່ງຂໍສະເໜີໃຫ້ຝ່າຍກຳປູເຈຍ ພິຈາລະນາສ້າງ ສາຍສົ່ງເຊື່ອມຕໍ່ກັນຢູ່ເຂດຊາຍແດນຂອງສອງປະເທດໃຫ້ແລ້ວໄວ. ພ້ອມກັນນັ້ນ, ຍັງໄດ້ເນັ້ນເຖິງຄວາມຈຳເປັນໃນການເພີ່ມ ທະວີການຮ່ວມມືກັບລະດັບທະວິພາຄີກໍ່ຄືພະຫຸພາຄີເປັນຕົ້ນໃນຂອບອາຊຽນ ເພື່ອຄວາມຈະເລີນວັດທະນາຂອງປະເທດທັງສອງ ກໍ່ຄືຂອງຄອບຄົວອາຊຽນ ແລະ ຂອງໂລກ. ຫລັງຈາກການພົບປະທັງສອງຝ່າຍ ຢ່າງເປັນທາງການແລ້ວ, ທ່ານນາຍົກລັດຖະມົນຕີ ທັງສອງໄດ້ເປັນກຽດເຂົ້າຮ່ວມເປັນສັກຂີພິຍານ ເຊັນສັນຍາວ່າດ້ວຍການຜ່ານແດນລະຫວ່າງ ລາວ-ກຳປູເຈຍ ແລະ ບົດບັນທຶກ ຄວາມເຂົ້າໃຈ ເພື່ອຈັດຕັ້ງປະຕິບັດສັນຍາ ແລະ ອະນຸສັນຍາວ່າດ້ວຍການຂົນສົ່ງທາງບົກລະຫວ່າງລາວ-ກຳປູເຈຍ. ຄະນະຜູ້ແທນ ຂັ້ນສູງກຳປູເຈຍ ມີແຜນການໄປຢ້ຽມຢາມບາງສະຖານທີ່ເສດຖະກິດ ແລະ ວັດທະນະທຳຈຳນວນໜຶ່ງ ທີ່ນະຄອນ ຫລວງວຽງຈັນ. ການຢ້ຽມຢາມ ສປປ ລາວ ຢ່າງເປັນທາງການຂອງສົມເດັດ ນາຍົກລັດຖະມົນຕີ ກຳປູເຈຍຄັ້ງນີ້, ເປັນຂີດໝາຍ ໃໝ່ແຫ່ງການເພີ່ມທະວີສາຍພົວພັນ ແລະ ການຮ່ວມມືລະຫວ່າງປະຊາຊົນສອງຊາດລາວ ແລະ ກຳປູເຈຍ ໃຫ້ຈະເລີນ ວັດທະນາຍິ່ງໆຂຶ້ນ.ຈາກນັ້ນຄະນະຜູ້ແທນຂັ້ນສູງ ແຫ່ງ ຣາຊະອານາຈັກ ກຳປູເຈຍ ຈະໄດ້ເຂົ້າຮ່ວມກອງປະຊຸມສຸດຍອດ GMS ຢູ່ນະຄອນຫລວງວຽງຈັນແຕ່ວັນທີ 30-31 ມີນາ 2008.